FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ກອງປະຊຸມຜ່ານຮ່າງຂໍ້ຕົກລົງ ວ່າດ້ວຍການຮັບຮອງລາຄາຊົດເຊີຍ ຈາກໂຄງການ ຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເຂດເມືອງດາກຈຶງ ແຂວງເຊກອງ ຂອງບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ.

- ອີງຕາມ ດຳລັດ ສະບັບເລກທີ 84/ລບ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດ ສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ.
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 74/ຈຂ.ຊກ, ລົງວັນທີ 09 ເມສາ 2018 ວ່າດ້ວຍການຮັບຮອງເອົາຫົວໜ່ວຍ ທົດແທນຜົນເສຍຫາຍໃຫ້ແກ່ປະຊາຊົນ ຜູ້ທີ່ຮັບຜົນກະທົບຈາກໂຄງການລົງທຶນພາຍໃນແຂວງເຊກອງ.
- ອີງຕາມ ດຳລັດ ເລກທີ 21/ລບ, ລົງວັນທີ 31 ມັງກອນ 2019 ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ-ແຂວງເຊກອງ ສະບັບເລກທີ 160/ຈຂ.ຊກ, ລົງວັນທີ 26/11/2020 ວ່າ ດ້ວຍການແຕ່ງຕັ້ງຄະນະປະທານ, ກອງເລຂາຄະນະກຳມະການຄຸ້ມຄອງສິ່ງແວດລ້ອມທຳມະຊາດ-ສັງຄົມ ແລະ ແກ້ໄຂຜົນກະທົບຈາກໂຄງການພັດທະນາທົ່ວແຂວງ;

ໃນຕອນເຊົ້າ ວັນທີ 31 ມີນາ 2022 ເວລາ 8:00-12:00 ໂມງ ທີ່ຫ້ອງປະຊຸມຊັ້ນ2 ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ. ໄດ້ຈັດກອງປະຊຸມຜ່ານຮ່າງຂໍ້ຕົກລົງ ວ່າດ້ວຍການຮັບຮອງລາຄາຊົດເຊີຍ ຈາກໂຄງການຜະລິດໄຟຟ້າຈາກພະລັງງານລົມ 600 ເມກາວັດ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເຂດເມືອງດາກຈຶງ ແຂວງເຊກອງ ຂອງບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ໂດຍການເປັນປະທານຂອງທ່ານ **ຂັນຕີ ສີລະວົງສາ** ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ-ແຂວງເຊກອງ, ມີຜູ້ເຂົ້າຮ່ວມທັງໝົດ: 28 ທ່ານ, ຍິງ: 03 ທ່ານ, ມາຈາກພະແນກການ, ຂະແໜງການກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງດາກຈຶງ ທີ່ນອນໃນຄະນະກຳມະການຄຸ້ມຄອງສິ່ງແວດລ້ອມ ແລະ ບໍລິສັດທີ່ປຶກສາດ້ານສິ່ງແວດລ້ອມ, ຜູ້ພັດທະນາໂຄງການ ( ມີລາຍຊື່ຕິດຂັດມາພ້ອມ ).

**I. ຈຸດປະສົງ:**

- ຮັບຟັງການສະເໜີຜ່ານຮ່າງຂໍ້ຕົກລົງ ວ່າດ້ວຍການຮັບຮອງລາຄາຊົດເຊີຍ ເປັນຂໍ້ຕົກລົງກຳນົດສະເພາະຈາກໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເຂດເມືອງດາກຈຶງ ແຂວງເຊກອງ ຂອງບໍລິສັດ ອິມແພັກເອັນເນີຈີ ເອເຊຍ ດີວີລົບເມັນ ຈຳກັດ.
- ເພື່ອມີຄຳເຫັນປຶກສາຫາລື ແລະ ເຫັນດີເປັນເອກະພາບກັນ ຕໍ່ຮ່າງຂໍ້ຕົກລົງ ວ່າດ້ວຍການຮັບຮອງລາຄາຊົດເຊີຍ ດັ່ງກ່າວ ເພື່ອປັບປຸງ ແລະ ນຳສະເໜີຂັ້ນເທິງ ອອກຂໍ້ຕົກລົງຮັບຮອງເປັນທາງການ.

**II. ເນື້ອໃນ:**

ກອງປະຊຸມໃຫ້ກຽດກ່າວເປີດຢ່າງເປັນທາງການ ຂອງທ່ານ **ຂັນຕີ ສີລະວົງສາ** ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ - ແຂວງເຊກອງ ຈາກນັ້ນ ກໍ່ໄດ້ຮັບຟັງການສະເໜີຜ່ານຮ່າງຂໍ້ຕົກລົງ ວ່າດ້ວຍການຮັບຮອງລາຄາຊົດເຊີຍ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT
สแกนด้วย CamScanner

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

ຈາກກອງເລຂາຄະນະກຳມະການຄຸ້ມຄອງສິ່ງແວດລ້ອມຂັ້ນແຂວງ ( ຂະແໜງສິ່ງແວດລ້ອມ, ພຊສ ) ເຊິ່ງເປັນຮ່າງ ຂໍ້ຕົກລົງກຳນົດສະເພາະ ໃນການຄິດໄລ່ການຊົດເຊີຍຂອງໂຄງການຜະລິດໄຟຟ້າຈາກພະລັງງານລົມ 600 ເມກາວັດ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເຂດເມືອງດາກຈຶງແຂວງເຊກອງ, ຫຼັງຈາກນັ້ນ ຜູ້ແທນກອງປະຊຸມ ກໍ່ໄດ້ ມີຄຳເຫັນປຶກສາຫາລື - ແລກປ່ຽນຄວາມຄິດຄວາມເຫັນຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ ແລະ ໄດ້ຕົກ ລົງ ເຫັນດີເປັນເອກະພາບຮ່ວມກັນດັ່ງນີ້:

1. ເຫັນດີເປັນເອກະພາບ ຕໍ່ຮ່າງຂໍ້ຕົກລົງ ແລະ ໃຫ້ຮ່າງເປັນຂໍ້ຕົກລົງ ສະເພາະ ວ່າດ້ວຍການຮັບຮອງລາຄາຊົດ ເຊີຍຈາກໂຄງການຜະລິດໄຟຟ້າ ຈາກພະລັງງານລົມ 600 ເມກາວັດ ລວມທັງສາຍສົ່ງໄຟຟ້າແຮງສູງ 500 ກວ ຢູ່ເຂດເມືອງດາກຈຶງ ແຂວງເຊກອງ ຂອງບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ ທີ່ ກອງເລຂາຄະນະກຳມະການຄຸ້ມຄອງສິ່ງ ແວດລ້ອມຂັ້ນແຂວງ ( ພຊສ ) ໄດ້ຮ່າງ ແລະ ກະກຽມ.
2. ເຫັນດີໃຫ້ກອງເລຂາຄະນະກຳມະການຄຸ້ມຄອງສິ່ງແວດລ້ອມ ( ພຊສ ) ນຳເອົາຂໍ້ຄິດເຫັນ ແລະ ຂໍ້ສະເໜີ ຕ່າງໆຂອງຄະນະກຳມະການຂັ້ນແຂວງ,ຂັ້ນເມືອງດາກຈຶງ ໃນກອງປະຊຸມຄັ້ງນີ້ໄປປັບປຸງເນື້ອໃນຮ່າງຂໍ້ຕົກລົງ ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ເປັນຕົ້ນ: ດ້ານໂຄງສ້າງ, ການອະທິບາຍສັບ, ນິຍາມ, ການກຳນົດ ມາດຕະຖານລາຄາຫົວໜ່ວຍຊົດເຊີຍໃຫ້ອີງໃສ່ຫົວໜ່ວຍລາຄາກາງ ທີ່ຂະແໜງການກ່ຽວຂ້ອງ ຢັ້ງຢືນຮ່ວມ ກັນແລ້ວປັບປຸງຄືນກັບຂະແໜງການກ່ຽວຂ້ອງເຊັ່ນ: ລາຄາຫົວໜ່ວຍການກໍ່ສ້າງ, ລາຄາທີ່ດິນ, ລາຄາປູກ ຕົ້ນໄມ້, ລາຄາຜົນລະປູກຕ່າງໆ, ໂດຍອີງໃສ່ເງື່ອນໄຂການປ່ຽນແປງຂອງເສດຖະກິດທ້ອງຕະຫຼາດໃນປະຈຸ ບັນກໍ່ຄືມາດຖານລາຄາທີ່ສູນກາງ ແລະ ທ້ອງຖິ່ນໄດ້ກຳນົດ ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງ.
3. ເຫັນດີໃຫ້ພະແນກການກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງດາກຈຶງເປັນຕົ້ນ: ພະແນກກະສິກຳແຂວງ, ພະແນກ ຍທຂ, ຂະແໜງທີ່ດິນ ( ພຊສ ), ຫ້ອງວ່າການເມືອງດາກຈຶງ, ຫ້ອງການ ຊສ ເມືອງດາກຈຶງ, ຫ້ອງການ ຍທຂ ເມືອງດາກຈຶງ ແລະ ຂະແໜງການກ່ຽວຂ້ອງ, ກວດກາຄືນບົດຄຳເຫັນຂອງຕົນທີ່ໄດ້ເຊັນຢັ້ງຢືນສົ່ງໃຫ້ ກອງເລຂາຄະນະກຳມະການຄຸ້ມຄອງສິ່ງແວດລ້ອມ ( ພຊສ ) ໄປແລ້ວໃນເມື່ອກ່ອນ ຍັງມີອັນໃດທີ່ຍັງບໍ່ທັນ ແທດເໝາະ, ບໍ່ທັນຖືກຕ້ອງ, ຊັດເຈນ ໃຫ້ຄົ້ນຄ້ວາຄືນໃໝ່ ກຳນົດລາຄາໃຫ້ລະອຽດໃນແຕ່ລະລາຍການ ຕາມຄວາມຮັບຜິດຊອບຂອງຕົນ, ແລ້ວເຊັນຢັ້ງຢືນຄືນໃໝ່ ສົ່ງໃຫ້ຂະແໜງສິ່ງແວດລ້ອມ ( ພຊສ ) ເພື່ອ ປັບປຸງພາຍໃນວັນທີ 7 ເມສາ 2022;
4. ເຫັນດີໃຫ້ກອງເລຂາຄະນະກຳມະການຄຸ້ມຄອງສິ່ງແວດລ້ອມ ( ພຊສ ) ປັບປຸງເນື້ອໃນຮ່າງຂໍ້ຕົກລົງດັ່ງກ່າວ ໃຫ້ສຳເລັດພາຍໃນວັນທີ 18 ເມສາ 2022 ເພື່ອສະເໜີທ່ານເຈົ້າແຂວງ ອອກຂໍ້ຕົກລົງເປັນທາງການ.

**III. ຄຳເຫັນຊີ້ນຳຂອງປະທານ:**

ຕອນທ້າຍກອງປະຊຸມປະທານໄດ້ມີຄຳເຫັນສະຫຼຸບ ແລະ ຮຽກຮ້ອງໃຫ້ບັນດາທ່ານໃນຄະນະກຳມະການ, ກອງເລຂາຄະນະກຳມະການຄຸ້ມຄອງສິ່ງແວດລ້ອມຂັ້ນແຂວງ, ຂັ້ນເມືອງ ຈົ່ງພ້ອມກັນນຳເອົາເນື້ອໃນຈິດໃຈຜົນ ຂອງກອງປະຊຸມຄັ້ງນີ້ ໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ກອງປະຊຸມ ໄດ້ປິດລົງເວລາ: 12:00 ໂມງ ຂອງວັນດຽວກັນດ້ວຍຜົນສຳເລັດອັນຈົບງາມ.

**ປະທານກອງປະຊຸມ** | **ຜູ້ບັນທຶກ**

ຂັນຕີ ສີລະວົງສາ
Khanty SYLAVONGSA

ສາຍຄຳ ຄູນປະເສີດ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

สแกนด้วย CamScanner